ຣະບົບ ວິນໂດວ ເພີ່ມເຕີມ

ເພື່ອບໍ່ຢາກໃຫ້ຜູ້ໃຊ້ຄອມພິວເຕີມີບັນຫາຕາມພາຍຫລັງ ແລະ ສິ່ງທີ່ທ່ານຄວນເຮັດເພີ່ມ ຫລັງຈາກການຕິດຕັ້ງ ຣະບົບ ວິນໂດວ[Windows] ໃສ່ຄອມພິວເຕີແລ້ວນັ້ນ ຄື

- ທ່ານຕ້ອງເສີມໂປຣແກຣມຕ່າງໆໃຫ້ທັນການ (Mise à jour, Update) ດ້ວຍການເອົາຫນູໄປຄິກໃສ່ Démarrer, Start ຢູ່ທີ່ຂ້າງລຸ່ມກົ້ນຊ້າຍຂອງຈໍ ອັນເປັນສີຂຽວ ຫລັງຈາກນັ້ນຈຶ່ງໄປຄິກໃສ່ Windows Update (ກ່ອນທ່ານຈະເສີມ ໂປຣແກຣມ ທ່ານຕ້ອງແນ່ໃຈວ່າ ຣະບົບ ຄອມພິວເຕີ (Système d'exploitation, Operating System) ຂອງທ່ານບໍ່ແມ່ນຂອງປອມ ຖ້າບໍ່ດັ່ງນັ້ນທ່ານຈະມີບັນຫາຕາມພາຍຫລັງ ແລະຖ້າວ່າ ທ່ານບໍ່ມີຄວາມແນ່ໃຈ ທ່ານບໍ່ຕ້ອງເຮັດອັນໃດເສີມໃນບົດນີ້ນອັນນີ້) ແຕ່ຢ່າລືມເສີມ DirectX ຢ່າງດຽວກໍແລ້ວກັນ ຈຶ່ງທ່ານສາມາດຈອກຫາເອົາເອງໄດ້

- ທ່ານຕ້ອງຕິດຕັ້ງ Adobe Reader ເສີມເຂົ້າໃສ່ຣະບົບວິນໂດວ ເພື່ອຈະໃຫ້ທ່ານສາມາດອ່ານຫນັງສືແບບ ພີດີແຟັບ[PDF] ໄດ້ ແລະກ່ອນຈະເຮັດໄດ້ ທ່ານຕ້ອງໄປເອົາ ໂປຣແກຣມດັ່ງກ່າວ ສາກລົງ(Télécharger, Download) ທີ່ www.adobe.fr ສຳລັບພາສາຝຣັ່ງ ແລະຢູ່ທີ່ www.adobe.com ສຳລັບພາສາອັງກິດ

- ທ່ານຕ້ອງຕິດຕັ້ງ Flash Player ແລະ Shockwave ເສີມເຂົ້າໃສ່ຣະບົບວິນໂດວ ທີ່ www.adobe.fr ສຳລັບພາສາຝຣັ່ງ ແລະພາສາອັງກິດຢູ່ທີ່ www.adobe.com

- ທ່ານຄວນຕິດຕັ້ງ Divx ເສີມເຂົ້າໃສ່ຣະບົບວິນໂດວ ທີ່ www.divx.com ສຳລັບພາສາອັງກິດ ແລະສຳລັບພາສາຝຣັ່ງຢູ່ທີ່ www.divx.com/?lang=fr ແລະສຳລັບພາສາອັງກິດທີ່ www.divx.com

- ທ່ານຕ້ອງຕິດຕັ້ງ Java Runtime Environment (JRE) ຈຶ່ງທ່ານສາມາດໄປເອົາ ໂປຣແກຣມ ສາກລົງ ຢູ່ທີ່ http://fr.sun.com/ ສຳລັບພາສາຝຣັ່ງ ແລະສຳລັບພາສາອັງກິດທີ່ www.sun.com

ສິ່ງທີ່ເລົ່າມາຂ້າງເທິງນີ້ ເກືອບຈະເວົ້າໄດ້ວ່າ «ຈຳເປັນ» ຕ້ອງໄດ້ຕິດຕັ້ງເສີມໃສ່ ຣະບົບ ຄອມພິວເຕີ ເພື່ອເວັ້ນບັນຫາຂອງຜູ້ໃຊ້ ຜິວ່າ ທ່ານບໍ່ສາມາດເສີມໂປຣແກຣມ ເຂົ້າຕື່ມໃສ່ ຣະບົບ ຄອມພິວເຕີ ໃຫ້ທັນການໄດ້ (Mise à jour, Update) ບາງ ໂປຣແກຣມ ຂ້າງເທິງນີ້ ທ່ານຈະບໍ່ສາມາດຕິດຕັ້ງມັນໄດ້ ແລະ ມັນຈະບອກເຫດຜົນແດ່ທ່ານເອງ ແຕ່ວ່າ ໂປຣແກຣມ ຂ້າງລຸ່ມນີ້ ທ່ານຈະເສີມຫລືບໍ່ເສີມ ກໍສຸດແລ້ວແຕ່ໃຈຂອງທ່ານເອງ ເວັ້ນ

- OpenOffice.org ຈຶ່ງເຮົາສາມາດໃຊ້ແທນ Microsoft Office ແລະ ກໍດີກວ່າ MS Office ຫລາຍເທົ່າອີກດ້ວຍ ອີກປະການນຶ່ງ ທ່ານສາມາດສາບເອກສານຂອງທ່ານໃຫ້ເປັນ ພີດີແຟັບ[PDF] ໄດ້ຢ່າງບໍ່ເສັງຈັກອັດເພີ່ມເຕີມ
    - http://fr.openoffice.org (ຝຣັ່ງ)
    - www.openoffice.org (ອັງກິດ)
- Firefox ຈຶ່ງເຮົາສາມາດໃຊ້ແທນ Internet Explorer (IE) ແລະ ກໍໄວກວ່າ

ຣະບົບ ວິນໂດວ ເພີ່ມເຕີມ

IE ຫລາຍເທົ່າອີກດ້ວຍ ພ້ອມດວກກັນນັ້ນ ທ່ານຍັງສາມາດ ລ່ອງລອຍ(Naviguer, Navigate) ໄປຕາມທຸກແຈໄດ້ ໂດຍບໍ່ຕ້ອງການເປີດ Navigateur ຫລື Browser (ນາວິຍານ, ນາວິຄານ, ນາວາຄັດ?) ຂອງທ່ານຫລາຍໆອັນພ້ອມກັນ ຍິ່ງໄປກວ່ານັ້ນ ທ່ານສາມາດໃຊ້ ທັນເດີເບີດ[Thunderbird] ຕາງ Microsoft Outlook ໃນການ ໃຊ້ ອີເມວ

- http://www.mozilla-europe.org/fr/products/firefox/
- http://www.mozilla-europe.org/fr/products/thunderbird/
- http://www.mozilla.org/

ຍັງມີຫລາຍອັນອີກ ເວັ່ນ Winamp, iTunes, Real Player, Movie Maker ດັ່ງນີ້ເປັນຕົ້ນ ແຕ່ສິ່ງສຳຄັນທີ່ທ່ານຄວນຮູ້ນັ້ນ ຄື ໂປຣແກຣມ ທຸກໆອັນທີ່ກ່າວມານີ້ ຈະ ບໍ່ໄດ້ເສັຍເງິນແມ້ແຕ່ອັດດວ ເພາະໄດ້ລ້ຳ ແລະຄືກຕ້ອງຕາມກົດຫມາຍຂອງທຸກໆປະເທດ ອີກດ້ວຍ

ແດ່ຄົນລາວທຸກຄົນທີ່ຮັກຫວງແລະປົກປ້ອງ ຄວາມເປັນລາວ

ຄຳແພວ ພູເພັວຣ້ລົນທອງ

ເມື່ອວັນທີ 8-11-07 ເດືອນ ພິສຈິກາ ພ.ສ. 2550 ແຫ່ງເມືອງ ປາຣິສ ປະເທດຝຣັ່ງ